# The Baptist Tabernacle of Los Angeles

1329 South Hope Street, L.A. Civic Center


Mailing Address:
P. O. Box 15308
Los Angeles, CA 90015

Phone: (213) 744-9999

E-mail: rlhymersjr@sbcglobal.net

www.sermonsfortheworld.com

www.baptisttabernacle.com






Dr. R. L. Hymers, Jr.
Senior Pastor

Dr. Christopher L. Cagan
Associate Pastor

Dr. Kreighton L. Chan
Assistant Pastor


ທັນວາ 2017

ເພື່ອນທີ່ຮັກ:

“ຕໍ່ສູ້ຄວາມຢ້ານທັງປວງ”ຄືເລື່ອງລາວຊີວິດຂອງຂ້າພະເຈົ້າຊຶ່ງຂ້າພະເຈົ້າຫາກໍຂຽນແລ້ວສອງສາມວັນກ່ອນ,ໃນ
ທ່າມກາງຄົນທີ່ຍົກຍ້ອງໜັງສືຂອງຂ້າພະເຈົ້າແມ່ນດຣ.ບັອບໂຈນ III ເຊິ່ງເອີ້ນຂ້າພະເຈົ້າວ່າ “ຜູ້ທຳນາຍ”
ດຣ.ບິລມັອນໂຣ ຜູ້ເປັນປະທານສອງເທື່ອຂອງ BBFI ກ່າວວ່າ “ໄຮເມີແມ່ນດານຽນສະໄໝໃໝ່” ແລະ ດຣ.ໂຣເບີດ
ຣໍລິງ ລູກຊາຍດຣ.ຈອນ ຣໍລິງຫົວໜ້າຂອງ BBF ແລະເປັນປະທານຂອງມູນນິທິຣໍລິງເອີ້ນຂ້າພະ
ເຈົ້າວ່າ“ຄົນອາມາລິກາດັ່ງເດີມ! ຄົນມີນິມິດ! ຊີວິດຂອງລາວສະແດງອອກເຖິງຄວາມຫຼົງໄຫຼເພື່ອເຮັດເກີດ
ຄວາມແຕກຕ່າງ” ດຣ.ນີລ ວີຟເວີ ປະທານມະຫາວິທະຍາໄລແບັບຕິດແຫ່ງລຸຍເຊຍນາໄດ້ເວົ້າວ່າເປັນ “ໜັງສື
ທີ່ຊວນໃຫ້ຫຼົງໄຫຼ ແລະດົນບັນດານໃຈກ່ຽວກັບຊາຍທີ່ກ້າຫານຄົນໜຶ່ງ ” ຜູ້ບັນຍາຍຂ່າວດຣ.ດອນ ບອຍຊ໌ໄດ້ ເວົ້າວ່າ
“‘ຕໍ່ສູ້ຄວາມຢ້ານທັງປວງ’ ຄວນຈະຖືກອ່ານໂດຍທຸກໆຄົນ,ບໍ່ແມ່ນແຕ່ພວກນັກເທດເທົ່ານັ້ນ, ໄຮເມີຄື
ແບບຢ່າງສຳຫຼັບທຸກຄົນ... ເລື່ອງຂອງລາວສະແດງເຖິງເລື່ອງທີ່ສຳຄັນແລະແຈ່ມແຈ້ງທີ່ສຸດທີ່ຊົ່ວໂມງນີ້ຕ້ອງ ການ-
ທັງຄວາມກ້າຫານ,ການອຸທິດ ແລະບຸກຄະລິກ ” ດຣ.ເອັດດີ ເປີວັນໂຕ ມິດຊັນນາລີຂອງເຮົາທີ່ໄປຮັບໃຊ້
ຢູ່ປະເທດອິນໂດເນເຊຍໄດ້ເວົ້າວ່າ “ຂ້ອຍຂໍແນະນຳໜັງສືນີ້ສຸດໆ, ເມື່ອພຣະເຈົ້າຊົງຢູ່ກັບມະນຸດຜູ້ນັ້ນກໍບໍ່ມີໃຜ
ປາບລົງໄດ້, ດຣ.ໄຮເມີຄືວິລະບຸລຸດຜູ້ທີ່ລອດຈາກສົງຄາມປານຕາຍຫຼາຍສະໜາມມາແລ້ວ”

ຈອນຊາມູເອວ ເຄແກນ ແມ່ນລູກຊາຍຂອງດຣ.ຄຣິສໂຕເຟີແອວ.ເຄແກນກັບເມຍຂອງລາວຈູດິດ
ເຄແກນຜູ້ຊ່ວຍສິດຍາພິບານຂອງເຮົາ,ຈອນແມ່ນຜູ້ຮັບໃຊ້ຝຶກງານຜູ້ທີ່ເຮັດວຽກກັບຂ້າພະເຈົ້າໃນຖານະເປັນຜູ້ຊ່ວຍໜຶ່ງໃນ
ສິ່ງທີ່ສຳຄັນທີ່ສຸດທີ່ເກີດຂຶ້ນຢູ່ໃນຄຣິສຕະຈັກຂອງພວກເຮົາກໍຄືຈອນໄດ້ຖະວາຍຊີວິດທີ່ຈະເທດສະໜາຂ່າວປະເສີດ,
ຕອນນີ້ລາວເປັນນັກຮຽນຢູ່ໂຮງຮຽນສາສະໜາສາດທັລບັອດທີ່ມະຫາວິທະຍາໄລໄບໂອລາ,
ຈອນໄດ້ຂຽນຄຳນຳໃສ່ຊີວະປະຫວັດຂອງຂ້າພະເຈົ້າວ່າ “ດຣ.ໄຮເມີມີໃຈດຽວເພາະເຫັນແກ່ພຣະຄຣິດແລະ ຄຣິສຕະຈັກ
ຄືກັບພວກນັກກິລາຊຸບເປີສະຕາ, ພວກນັກການເມືອງລະດັບສູງ ແລະພວກຜູ້ຊະນະ...ຕອນອາຍຸ 77
ປີພ້ອມກັບການເປັນມະເຮັງ(ໃນຊ່ວງການບັນເທົາ)ແລະຄວາມອ່ອນແອທີ່ເກີດຈາກການຮັກສາດ້ວຍຢາຄົນສ່ວນຫຼາຍຄົງຈ
ະອອກບຳນານແລ້ວ, ແຕ່ດຣ.ໄຮເມີຍັງຄົງຕໍ່ສູ້ເພື່ອຄຣິສຕະຈັກຂອງເຮົາ ແລະພຣະເຈົ້າຂອງເຮົາ!
ຂ້ອຍເຄີຍເຫັນເພິ່ນລາກຕົວເອງຂຶ້ນທຳມາດແລ້ວເທດ, ເຖິງແມ່ນວ່າໄດ້ນອນພຽງໜ້ອຍດຽວໃນຄືນກ່ອນໜ້ານັ້ນ,
ຂາທັງສອງຂ້າງເກືອບຈະບໍ່ຄ້ຳເພິ່ນໄດ້ແລະທ້ອງຂອງເພິ່ນໜີບໄວ້ແຕ່ເພິ່ນກໍຍັງຢືນໝັ້ນເທິງທຳມາດ,ໂດຍໄດ້ກຳລັງຈາກ
ພຣະຄຣິດ, ແລ້ວເພິ່ນເທດແນວໃດແດ່? ຄືກັບໂຕສິງ!

ບົດເທດທີ່ອ່ອນແອທີ່ສຸດຂອງເພິ່ນຖືກຂັບເຄື່ອນດ້ວຍພະລັງຫຼາຍກວ່າທີ່ທ່ານເຄີຍໄດ້ຍິນຈາກບ່ອນອື່ນ! ນັ້ນແຫຼະຄືສາເຫດທີ່ພວກສິດຍາພິບານທົ່ວໂລກເທດບົດເທດຂອງເພິ່ນຢູ່ໃນທຳມາດຂອງພວກເຂົາ...ປັດຈຸບັນບົດເທດຕ່າງໆຂອງດຣ.ໄຮເມີຖືກແປເປັນພາສາຕ່າງໆ 26 ພາສາ...ບົດເທດຂອງເພິ່ນຕອນນີ້ຖືກພຣະເຈົ້າໃຊ້ເພື່ອເຮັດໃຫ້ເກີດຜົນກະທົບທີ່ມີລິດອຳນາດໄປທົ່ວໂລກ, ປີກາຍນີ້ມີ 1,5 ລ້ານຄົນຢູ່ໃນ 218 ປະເທດທີ່ອ່ານບົດເທດຂອງເພິ່ນ,ເບິ່ງວິດີໂອຂອງເພິ່ນ ແລະໄດ້ຮັບແຮງບັນດານໃຈຈາກຄຳເທດສະໜາຂອງເພິ່ນທີ່ www.sermonsfortheworld.com ເລື່ອງລາວຊີວິດຂອງດຣ.ໄຮເມີຈະເປັນແຮງບັນດານໃຈໃຫ້ທານທີ່ຈະມີຊີວິດຢູ່ເພື່ອພຣະຄຣິດ-ຜູ້ທີ່ເພິ່ນຮັກສຸດໆ ແລະຮັບໃຊ້ດ້ວຍຄວາມສັດຊື່, ຂ້ອຍດີໃຈທີ່ຈະເວົ້າວ່າດຣ.ໄຮເມີໄດ້ຮັບກຳລັງຂອງເພິ່ນຄືນໃນສອງສາມອາທິດທີ່ຜ່ານມາ, ຂ້ອຍຂໍອະທິຖານຂໍໃຫ້ມະເຮັງຢ່າໄດ້ກັບມາເກີດກັບເພິ່ນອີກ ແລະຂໍໃຫ້ເພິ່ນມີຊີວິດຕໍ່ອີກຫຼາຍໆປີ"

ດຣ.ໂຣເບີດແອວ.ຊຳເມີ ນັກປະກາດຂ່າວປະເສີດທີ່ຮູ້ຈັກດີ ແລະເປັນບັນນາທິການຂອງ "ນັກປະກາດຕາມພຣະຄຳພີ" ໄດ້ກ່າວວ່າ "ຂ້າພະເຈົ້າດີໃຈ ແລະຂໍຊົມເຊີຍຊາຍທີ່ເຕັມໃຈທີ່ຈະຢືນຢັດເພື່ອຄວາມຈິງ...ເຖິງແມ່ນເມື່ອທຸກຄົນຕໍ່ສູ້ລາວກໍຕາມ, ໂຣເບີດເລສລີໄຮເມີ ຈູເນຍ ຄືປະເພດຂອງຄຣິສຕຽນຜູ້ຮັບໃຊ້ຂອງພຣະ ຄຣິດ"(***The Honor Was All Mine: Giants of the Faith Whose Paths Crossed Mine,*** 2015, pp. 104, 105)ພວກທ່ານສາມາດສັ່ງຊື້ໜັງສືຊີວະປະຫວັດຂອງຂ້າພະເຈົ້າເລື່ອງ ***"ຕໍ່ສູ້ຄວາມຢ້ານທັງປວງ"*** ໄດ້ໂດຍການໂທຫາດຣ.ຄຣິສໂຕເຟີແອວ.ເຄແກນທີ່ເບີ(323)735-3320 ຫຼັງຈາກທີ່ໜັງສືວາງຈຳໜ່າຍໃນລະດູໃບໄມ້ປົ່ງປີ 2018.

ໂນອາ ຊອງຄືຄົນໜຸ່ມອີກຄົນຢູ່ຄຣິສຕະຈັກຂອງເຮົາທີ່ຖືກເອີ້ນໃຫ້ເທດສະໜາ, ລາວກຳລັງຮຽນຈົບປະລິນຍາຢູ່ວິທະຍາໄລຂອງລາວ ແລ້ວຈະໄປຮຽນຕໍ່ຢູ່ໂຮງຮຽນພຣະຄຳພີ, ໂນອາຈະຊ່ວຍຈອນເຄແກນຕອນທີ່ຈອນໄດ້ເປັນສິດຍາພິບານຄຣິສຕະຈັກຂອງພວກເຮົາ ແລະຂ້າພະເຈົ້າກໍຈະບໍ່ເປັນສິດຍາພິບານອີກ, ໂນອາກັບຈອນທັງສອງຄົນເປັນນັກເທດໜຸ່ມທີ່ໂດດເດັ່ນ, ຊ່ວງຕົ້ນປີນີ້ໂນອາໄດ້ເທດຢູ່ໃນປະເທດອິນໂດເນເຊຍກັບປະເທດຈີນ, ຈອນໄປເທດຢູ່ສາທາລະນະລັດໂດໂມນິກັນ ກັບງານປະຊຸມສອງບ່ອນຢູ່ປະເທດອິນເດຍ, ຈອນກັບໂນອາ ທັງສອງຈະເດີນທາງໄປອັຟຣິກາພ້ອມກັບດຣ.ເຄແກນ,ບ່ອນທີ່ພວກເຂົາຈະໄດ້ເທດສະໜາຢູ່ໃນປະເທດອູກັນດາ,ເຄນຢາ ແລະຣະວັນນາໃນຕົ້ນເດືອນມັງກອນປີໜ້ານີ້.

ພວກເຮົາໄດ້ເພີ່ມພາສາມາຣາທີ(ອີກພາສາໜຶ່ງຂອງອິນເດຍ) ກັບພາສາຄຣີໂອເລ(ພາສາຂອງປະເທດເຮຕີ)ໃນຕົ້ນປີນີ້, ສະນັ້ນບົດເທດສະໜາເປັນພາສາຕ່າງໆຂອງພວກເຮົາຕອນນີ້ຈຶ່ງເປັນ 36 ພາສາແລ້ວຢູ່ໃນເວັບໄຊຂອງພວກເຮົາ!

ຂ້າພະເຈົ້າກັບເມຍຈະສະຫຼອງຄົບຮອບວັນແຕ່ງງານຂອງພວກເຮົາຄົບຮອບ 35 ປີໃນເດືອນກັນຍາ, ອີລີນາຄືຜູ້ດູແລພວກຄົນໜຸ່ມຜູ້ຍິງຢູ່ຄຣິສຕະຈັກຂອງເຮົາ,ລາວເຮັດວຽກໄດ້ດີຫຼາຍໃນການໃຫ້ຄຳປຶກສາເຂົາເຈົ້າອີລີນາແມ່ນຄົນງານຄຣິສຕຽນຜູ້ຍິ່ງໃຫຍ່ທີ່ສຸດທີ່ເຮັດວຽກຂ້າມວັດທະນາທຳເທົ່າທີ່ຂ້າພະເຈົ້າເຄີຍຮູ້ຈັກມາກ່ອນ,ເຊິ່ງພວກຜູ້ຍິງສ່ວນຫຼາຍແມ່ນຊາວຕາເວັນອອກ ແລະອີລີນາກໍເປັນຄົນພື້ນເມືອງຊາວກົວເຕມາລາ!

ໂຣເບີດກັບຈອນເວສລີລູກຊາຍຂອງຂ້າພະເຈົ້າທັງສອງຄົນໄດ້ຊ່ວຍຂ້າພະເຈົ້າຫຼາຍຢ່າງຢູ່ຄຣິສຕະຈັກຂອງພວກເຮົາ,ໃນເດືອນກຸມພາຫຼານສາວຂອງພວກເຮົາຊື່ຊາຣາຈະເກີດອອກມາໃຫ້ກັບໂຣເບີດກັບຈິນເມຍຂອງ ລາວ, ລູກສາວຜູ້ທີ່ໜຶ່ງຂອງພວກເຂົາອາຍຸເກືອບສອງປີແລ້ວ, ລາວຢ່າງໄດ້ກັບເວົ້າໄດ້ແລ້ວ-ແລະເປັນເດັກທີ່ໜ້າຮັກຜູ້ທີ່ມັກຫອມແກມຂ້າພະເຈົ້າບໍ່ວ່າຂ້າພະເຈົ້າຈະເຫັນລາວຢູ່ໃສກໍຕາມ! ລາວເຮັດໃຫ້ໃຈຂອງຂ້າພະເຈົ້າຮ້ອງເພງດ້ວຍຄວາມຊື່ນຊົມຍິນດີ!

ໃນເດືອນພະຈິກຂ້າພະເຈົ້າໄດ້ບັບຕິດສະມາຄົນໜຸ່ມ 13 ຄົນ, ທັງໝົດນອກຈາກສາມຄົນທີ່ລອດຈາກໂລກ-ມືແດນນີ້ ຄາລອສ, ທິໂມທີ ແຊນ, ໂຈເຊບ ກ້ອງ, ຈູດີ ລີ, ໂທມັສ ລວງ, ໂຢຮານາ ສີກາໂມໂຕ, ມິນວູ,ທອມ ເຊຍ, ເຈສສີກາ, ຢີນ, ອາຢາໂກະ ຊາບາລາກາ, ອາລິເຊຍ ແຊັກຄາມິດຊິນ, ເຈສຊີ ແຊັກຄາມິດຊິນ ແລະໄບຢັງ ຊາງ, ພວກທ່ານສາມາດບອກຈາກຊື່ຂອງພວກເຂົາໄດ້ວ່ານີ້ແມ່ນກຸ່ມຄຣິສຕຽນໜຸ່ມທີ່ແຕກຕ່າງກັນ, ພວກເຮົາພູມໃຈທີ່ມີຄົນຈາກ 20 ຊົນເຜົ່າເປັນສະມາຊິກຂອງຄຣິສຕະຈັກທີ່ຍິ່ງໃຫຍ່ຢູ່ໃນໃຈກາງເມືອງລອສແອງເຈີລິສ! ໃນເດືອນພະຈິກພວກເຮົາຍັງໄດ້ເຈີມຕັ້ງຊາຍໜຸ່ມ 5 ຄົນເປັນຜູ້ຊ່ວຍ-ຄືແອຣ່ອນ ແຢນຊີ, ຄຽວດ້ອງລີ, ແຈັກ ແງັນ, ໂນອາຊອງແລະ ຊາມູເອວ ເຄແກນ, ຕາມດ້ວຍແບບຢ່າງຂອງຄຣິສຕະຈັກຍຸກຕົ້ນ,ຈອນໄດ້ຖືກເຈີມໃຫ້ເປັນຜູ້ຊ່ວຍກອ່ນເພື່ອທີ່ຈະເຈີມເປັນສິດຍາພິບານຕອນທີ່ລາວຮຽນຈົບວິທະຍາໄລພຣະຄໍາພີໃນສອງປີຂ້າງໜ້າ ແລະຖືກຕັ້ງໃຫ້ເປັນສິດຍາພິບານຄຣິສຕະຈັກຂອງພວກເຮົາ, ຈອນໄດ້ເທດສະໜາເກືອບທຸກເຊົ້າວັນອາທິດໃຫ້ກັບພວກຄົນໜຸ່ມຫຼາຍຄົນທີ່ມາຢັ້ງມຄຣິສຕະຈັກຂອງພວກເຮົາແຕ່ລະອາທິດ, ລາວຄື "ລູກຊາຍ" ຂອງຂ້າພະເຈົ້າໃນງານຮັບໃຊ້, ເຊີນເບິ່ງໜຶ່ງໃນຄໍາເທດສະໜາຂອງລາວທາງເວັບໄຊຂອງພວກເຮົາທີ່ (www.sermonsfortheworld.com) ຂ້າພະເຈົ້າຈະສືບຕໍ່ເທດສະໜາຕອນແລງວັນອາທິດແລະແລງວັນເສົາຕາບໃດທີ່ຂ້າພະເຈົ້າຍັງເຮັດໄດ້.

ປີໜ້າພວກເຮົາຈະສະຫຼອງຄົບຮອບ 60 ປີໃນການຮັບໃຊ້ຂອງຂ້າພະເຈົ້າ! ຂ້າພະເຈົ້າບໍ່ຢາກເຊື່ອວ່າຕົນເອງໄດ້ເທດສະໜາຂ່າວປະເສີດມາໄດ້ 60 ປີແລ້ວ! ຕອນນີ້ມະເຮັງຂອງຂ້າພະເຈົ້າຢູ່ໃນຊ່ວງບັນເທົາ,ຈົ່ງອະທິຖານເພື່ອບໍ່ໃຫ້ມັນເກີດອີກຈົນຂ້າພະເຈົ້າຈະສະຫຼອງຄົບຮອບ 70 ປີຂອງຂ້າພະເຈົ້າໃນການເທດສະໜາ ແລະເປັນສິດຍາພິບານພ້ອມກັບຈອນແລະໂນອາໃນຄຣິສຕະຈັກທີ່ອັດສະຈັນຂອງພວກເຮົາ! ອີລີນາຄືຊາຄູ່ຂອງຂ້າພະເຈົ້າໃນງານຮັບໃຊ້, ລາວເຮັດວຽກຄຽງຂ້າງຂ້າພະເຈົ້າທຸກວັນໃນຂະນະທີ່ພວກເຮົາຊະນະວິນຍານພວກຄົນໜຸ່ມຈາກໂລກຢູ່ໃຈກາງເມືອງທີ່ໃຫຍ່ແລະຊົ່ວແຫ່ງລອສແອງເຈີລິສ, ແລະຖ້າປາສະຈາກຜູຊ່ວຍຂອງຂ້າພະ ເຈົ້າດຣ.ຄຣິສໂຕເຟີແອວ.ເຄແກນ ທຸກຢ່າງໃນນີ້ອາດຈະບໍ່ມີວັນເປັນໄປໄດ້, ຂ້າພະເຈົ້າຍັງຕ້ອງຍົກຄວາມດີຄວາມຊອບໃຫ້ກັບດຣ.ໄຄຣ໌ທັນແອວ.ແຊນ, ນາງເອັມມາ ສາລາຊ່າ ແລະພວກຜູ້ຊ່ວຍ ກັບພວກຜູ້ແປພາສາທຸກຄົນຖ້າບໍ່ມີພວກເຂົາງານຮັບໃຊ້ນີ້ຄົງຈະເກີດຂຶ້ນບໍ່ໄດ້.

ພວກເຮົາໄດ້ສະຫຼອງກຸດຈີນໃນວັນທີ 29 ເດືອນມັງກອນ, ໂນອາ ຊອງ ເທດຕອນເຊົ້າ ແລະດຣ.ໄຄຣ໌ທັນແອວ.ແຊນ ໄດ້ເທດໃນການນະມັດສະການຕອນແລງ, ຂ້າພະເຈົ້າໄດ້ພາຄອບຄົວໄປພັກຜ່ອນຢູ່ເປີໂຕວັລລາຕ້າປະເທດແມັກຊີກໂກໃນເດືອນເມສາພ້ອມດ້ວຍໂຣເບີດ,ຈີນ ແລະນາງນ້ອຍຮັນນາ,ເວສລີ,ລິນດາແມ່ຂອງອີລີນາ, ມັນງາມຫຼາຍ, ອຸ່ນແລະສະຫງົບ, ດຣ.ໂຣເບີດແອວ.ຊໍາເມີຜູ້ທີ່ຕາຍຕອນອາຍຸ 94 ປີໃນເດືອນທັນວາປີ 2016 ໄດ້ເຮັດໃຫ້ຂ້າພະເຈົ້າແປກໃຈທີ່ໄດ້ມອບໜັງສືຂອງເພິ່ນທັງໝົດໃຫ້ພວກເຮົາເພື່ອຂາຍທາງເວັບໄຊຂອງພວກເຮົາ,ນີ້ຄືບ່ອນດຽວເທົ່ານັ້ນທີ່ສາມາດຊື້ໜັງສືຂອງດຣ.ຊໍາເມີໄດ້ -ຢູ່ທີ່ www.sermonsfortheworld.com ຈົ່ງເບິ່ງຢູ່ທາງໜ້າເພັຈທີ່ມີພື້ນສີດໍາ, ພວກເຮົາໄດ້ເນັ້ນເລື່ອງການຟື້ນຟູຕັ້ງແຕ່ເດືອນສິງຫາຈົນຮອດລະດູໃບໄມ້ລົ່ນ, ຂ້າພະເຈົ້າໄດ້ເທດສະໜາຫຼາຍກວ່າສີ່ສິບເທື່ອ,ຫຼາຍຄືນໃນຂະນະທີ່ພຣະເຈົ້າໄດ້ສະເດັດລົງມາ ແລະມີຫຼາຍຄົນທີ່ຫວັງວ່າລອດແລ້ວ, ແລະຄົນອື່ນໆໄດ້ຮັບການຟື້ນຟູ, ນີ້ແມ່ນປີທີ່ສອງທີ່ພຣະເຈົ້າໄດ້ລົງມາ ແລະອວຍພອນ ຄຣິສຕະຈັກຂອງພວກເຮົາດ້ວຍຊ່ວງເວລາແຫ່ງການຟື້ນຟູ! ພວກເຮົາກໍາລັງອະທິຖານເພື່ອການຟື້ນຟູເພີ່ມອີກໃນປີໜ້າ! ທິໂມທີລູກຊາຍຂອງດຣ.ແຊນໄດ້ກາຍມາເປັນຜູ້ສະໝັກຜູ້ຊ່ວຍ ແລະໄດ້ເທດສະໜາດ້ວຍບົດເທດທີ່ມີພະລັງໃນວັນອາທິດຕອນເຊົ້າໃນຊ່ວງເທດສະການກາງລະດູໃບໄມ້ລົ່ນຂອງຄົນຈີນໃນວັນທີ 8 ເດືອນຕຸລາ,

ຂ້າພະເຈົ້າກຳລັງວາງແຜນທີ່ຈະເລີ່ມຂຽນໜັງສືເຫຼັ້ມໜຶ່ງເລື່ອງການຟື້ນຟູໃນປີໜ້າຫຼັງຈາກທີ່ໜັງສືຊີວະປະຫວັດຂອງຂ້າພະເຈົ້າຖືກພິມອອກມາຈຳໜ່າຍແລ້ວ, ຈົ່ງອະທິຖານເພື່ອໂຄງການນີ້ແດ່.

ມື້ອື່ນນີ້ແມ່ນວັນຂອບຄຸນພຣະເຈົ້າ, ເມຍຂອງຂ້າພະເຈົ້າໄດ້ເຊີນຫຼາຍກວ່າ 40 ຄົນເພື່ອມາສະຫຼອງກັບພວກເຮົາຢູ່ເຮືອນພວກເຮົາ, ມັນເປັນຄຳອະທິຖານຂອງພວກເຮົາທີ່ພຣະຄຣິດຈະໄດ້ຮັບການຍົກຂຶ້ນຢູ່ໃນເຮືອນຂອງພວກເຮົາໃນຊ່ວງລະດູການຄຣິສມາດທີ່ງົດງາມແລະມີຄວາມໝາຍນີ້, ຂໍພຣະເຈົ້າອວຍພອນທຸກຄົນ!



ປູໄຮເມີກັບຫຼານສາວຮັນນາຜູ້ໜ້າຮັກຂອງເພິ່ນ!

ດ້ວຍຄວາມເຄົາລົບໃນພຣະເຢຊູ



ດຣ.ໄຮເມີ ຈູເນຍ
ຟີລິບປອຍ 4:13

*ຈົ່ງຄົ້ນຫາວ່າເປັນຫຍັງພວກສິດຍາພິບານ 120,000ຈຶ່ງເຂົ້າໄປເບິ່ງເວັບໄຊຂອງພວກເຮົາປີກາຍນີ້, ມັນມີບົດເທດພາສາຕ່າງໆເປັນຮ້ອຍໆເລື່ອງໃນ 36 ພາສາ,ແລະວິດີໂອໃນ 3 ພາສາ, ຈົ່ງກວດເບິ່ງຄຳເທດສະໜາພາສາຕ່າງໆຖ້າທ່ານເປັນນັກເທດແບບຂ້າພະເຈົ້າ, ຈົ່ງ ເລີ່ມເລືອກເອົາບົດເທດອັນໜຶ່ງໄປເທດ, ປະມານ 1,500,000 ຄົນ(ລວມທັງນັກເທດ 120,000 ຄົນ)ໄດ້ຮັບຄວາມຊ່ວຍເຫຼືອຈາກຄຳເທດສະໜາໃນປີນີ້ທີ່*
***WWW.SERMONSFORTHEWORLD.COM***



ນາງອາຣິດອນໂດ,ເວສລີ,ເມຍດຣ.ໄຮເມີ,ໂຮເບີດເລສລີ
ອຸ້ມນາງນ້ອຍຮັນນາ,ຈີນໄຮເມີ(ເມຍໂຮເບີດ)ກັບດຣ.ໄຮເມີ
ຢູ່ໃນຫ້ອງໂຖງຂອງໂຮງແຮມທີ່ເປີໂຕວັລລາຕ້າແມັກຊິກໂກ.




ດຣ.ໄຮເມີຕື່ນເຕັ້ຍທີ່ເຫັນເຄັກວັນ
ເກີດຄົບຮອບ76 ປີຂອງເພິ່ນ!



ດຣ.ໄຮເມີບັບຕິດສະມາໃຫ້ນາງໄບຢາງ ຊາງ



ດຣ.ໄຮເມີມອບພຣະຄຳພີສະກຳຟິວສຶກສາ
ໃຫ້ແຕ່ລະຄົນທີ່ຮັບບັບຕິດສະມາແລ້ວ



ຮັນນາໄຮເມີກັບປູທວດຣາຟາເອວຊູລາຂອງ
ລາວຈາກປະເທດກົວເຕມາລາ



ພວກຜູ້ຊ່ວຍໃໝ່ທີ່ຖືກເຈີມຕັ້ງ(ແຖວໜ້າ)
ກັບຜູ້ຮັບບັບຕິດສະມາໃໝ່(ແຖວຫຼັງ)

*ເວັບໄຊຄຳເທດສະໜາຂອງພວກເຮົາມີບົດເທດເປັນພາສາຕ່າງໆທັງໃນພາສາລາວແລະອີກ 35 ພາສາ*
***ທີ່ WWW.SERMONSFORTHEWORLD.COM***
*ເຊັ່ນດຽວກັນເຊີນເຂົ້າຢ້ຽມເວັບໄຊຄຣິສຕະຈັກຂອງພວກເຮົາທີ່* ***WWW.BAPTISTTABERNACLE.COM***




ວັນເກີດເມຍດຣ.ໄຮເມີ,ດຣ.ໄຮເມີກຳລັງປ້ອນເຄັກໃຫ້ນາງ
ນ້ອຍຮັນນາ!



ດຣ.ໄຮເມີກັບເມຍຂອງເພິ່ນ



ດຣ.ໄຮເມີກັບຈອນຊາມູເອວ ເຄແກນ
ແລະຈູລີ່ ສີວິໄລຄູ່ໝັ້ນຂອງລາວ



ວິນຊຕັນຊອງ,ນາຍແປພາສາຈີນຜູ້ຍິ່ງໃຫຍ່ຂອງເຮົາ(ກາງ)
ຈອນຊາມູເອວເຄແກນ(ຊ້າຍ)ແລະໂນອາ ຊອງ(ຂວາ)



ຈອນຊາມູເອວ ເຄແກນກຳລັງເທດຢູ່ສາທາລະນະລັດ
ໂດໂມນິກັນພ້ອມກັບພໍ່ຂອງລາວທີ່ແປເປັນພາສາສະເປນ



ຈອນຊາມູເອວ ເຄແກນເທດສະໜາຢູ່ຄ້າຍໃນອິນເດຍ

*ເວັບໄຊຄຳເທດສະໜາຂອງພວກເຮົາມີບົດເທດເປັນພາສາຕ່າງໆທັງໃນພາສາລາວແລະອີກ 35 ພາສາ*
*ທີ່ **WWW.SERMONSFORTHEWORLD.COM***
*ເຊັ່ນດຽວກັນເຊີນເຂົ້າຢ້ຽມເວັບໄຊຄຣິສຕະຈັກຂອງພວກເຮົາທີ່ **WWW.BAPTISTTABERNACLE.COM***